# ບົດຂ່າວ

UNDP
Empowered lives.
Resilient nations.

## ວັນສາກົນໂຄສະນາເພື່ອຕ້ານລະເບີດບໍ່ທັນແຕກ / ມີນ 2019

**ທີ່ບ້ານດ້າງ, ເມືອງມະຫາໄຊ, 4 ເມສາ 2019** – ເພື່ອເປັນຂີດໝາຍສຳຄັນສຳລັບວັນສາກົນໂຄສະນາເພື່ອຕ້ານລະເບີດບໍ່ທັນແຕກໃນປີນີ້, ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ (ຄຊກລ) ແລະ ອົງການສະຫະປະຊາຊາດ ເພື່ອການພັດທະນາ (UNDP) ໄດ້ຈັດພິທີສະເຫຼີມສະຫຼອງວັນດັ່ງກ່າວຢູ່ທີແຂວງຄຳມ່ວນ.

ວັນທີ 4 ເມສາ ເປັນ*ວັນສາກົນໂຄສະນາ ເພື່ອຕ້ານລະເບີດບໍ່ທັນແຕກ / ມີນ ແລະ ຊ່ວຍເຫຼືອການດຳເນີນງານເພື່ອແກ້ໄຂບັນຫາມີນ.* ຢູ່ໃນຫຼາຍໆປະເທດທີ່ໄດ້ຮັບຜົນກະທົບຈາກສິ່ງເສດເຫຼືອຈາກສົງຄາມ, ກິດຈະກຳຕ່າງໆທີ່ກຳລັງເກີດຂຶ້ນໃນມື້ນີ້ ແມ່ນເພື່ອຍົກໃຫ້ເຫັນວ່າສິ່ງເສດເຫຼືອຈາກສົງຄາມໄດ້ສົ່ງຜົນສະທ້ອນແນວໃດຕໍ່ກັບຊຸມຊົນ ແລະ ປະຊາຊົນ.

ໃນໂອກາດນີ້, ທ່ານ ປອ. ຄຳແພງ ໄຊສົມແພງ, ລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ປະທານ ຄຊກລ ແລະ ທ່ານ ນ. ຄາຣີນາ ອິມໂມເນັນ, ຜູ້ຕາງໜ້າອົງການ UNDP ໄດ້ນຳພາຄະນະມາທີ່ເມືອງມະຫາໄຊ. ແຂວງຄຳມ່ວນ ເປັນແຂວງໜຶ່ງທີ່ມີລະເບີດບໍ່ທັນແຕກຕົກຄ້າງຫຼາຍທີ່ສຸດຂອງປະເທດ. ກິດຈະກຳຕ່າງໆເພື່ອສະເຫຼີມສະຫຼອງວັນດັ່ງກ່າວໄດ້ຈັດຂຶ້ນທີ່ໂຮງຮຽນປະຖົມຂອງບ້ານດ່າງ ເຊິ່ງໄດ້ມີການມອບຮັບປຶ້ມຫຼັກສູດກ່ຽວກັບລະເບີດບໍ່ທັນແຕກ ແລະ ເສື້ອຄໍມົນທີ່ມີໂລໂກ້ເປົ້າໝາຍການພັດທະນາແບບຍືນຍົງ ທີ 18 ໃຫ້ແກ່ນັກຮຽນເພື່ອສຶກສາກ່ຽວກັບຄວາມສ່ຽງຂອງລະເບີດບໍ່ທັນແຕກ.

ຕໍ່ໜ້ານັກຮຽນ ແລະ ຄູ-ອາຈານ, ທ່ານລັດຖະມົນຕີ ໄດ້ກ່າວວ່າ: "ໃນໄລຍະຊຸມປີທີ່ຜ່ານມານີ້, ຢູ່ແຂວງຄຳມ່ວນມີອຸບັດເຫດຈາກ ລບຕ 46 ຄັ້ງ ເຮັດໃຫ້ມີຜູ້ບາດເຈັບ ແລະ ເສຍຊີວິດ 94 ຄົນ, ສະເພາະເມືອງມະຫາໄຊມີອຸບັດເຫດຈາກ ລບຕ 5 ຄັ້ງ ແລະ ມີຜູ້ບາດເຈັບ ແລະ ເສຍຊີວິດ 14 ຄົນ." ຕົວເລກຜູ້ບາດເຈັບ ແລະ ເສຍຊີວິດໃນທົ່ວປະເທດ ໄດ້ຫຼຸດລົງຫຼາຍໃນຊຸມປີທີ່ຜ່ານໆມາ ເຊິ່ງຢູ່ໃນລະດັບທີ່ຕໍ່າລົງ ທີ 24 ຄົນ ໃນປີ 2018.

ນອກຈາກນີ້, ທ່ານ ຄຳສີ ອຸດທິວົງ, ຮອງເຈົ້າແຂວງ ແຂວງຄຳມ່ວນ ຮັບຜິດຊອບວຽກງານລະເບີດບໍ່ທັນແຕກ ແລະ ປະທານຄະນະກຳມະການຄຸ້ມຄອງ ລບຕ ແຂວງ ພ້ອມດຽວກັນກັບ ທ່ານ ພູຊຽວ ຈັນທະສົມບູນ, ຫົວໜ້າ ຄຊກລ

ກໍຍັງໄດ້ເຂົ້າຮ່ວມໃນພິທີດັ່ງກ່າວ. ຫຼັງຈາກພິທີມອບຮັບປຶ້ມ ແລະ ເສື້ອຄຸມັນແລ້ວ, ກໍສືບຕໍ່ກິດຈະກຳດ້ວຍການສະແດງ ລະຄອນຫຸ່ນ ເພື່ອເຜີຍແຜ່ກ່ຽວກັບຄວາມສ່ຽງຂອງລະເບີດບໍ່ທັນແຕກ ເຊິ່ງຈັດໂດຍໂຄງການເກັບກູ້ລະເບີດແຫ່ງຊາດ (UXO Lao).

ບ້ານດ່າງ ແລະ ບ້ານອື່ນໆທົ່ວເມືອງ ໄດ້ຮັບຜົນກະທົບຢ່າງໜັກໜ່ວງຈາກໄພນ້ຳຖ້ວມປີກາຍນີ້ ເນື່ອງຈາກວ່າ ນ້ຳອາດຈະເຮັດໃຫ້ ລບຕ ມີການເຄື່ອນຍ້າຍ. ເຂດທີ່ໄດ້ຮັບການກວດກູ້ ລບຕ ແລ້ວກ່ອນໜ້ານີ້ ຫຼື ເຂດທີ່ບໍ່ມີ ລບຕ ມາຮອດດຽວນີ້ ກໍອາດຈະມີ ລບຕ ແລ້ວ.

ທ່ານ ນ. ຄາຣິນາ ອິມໂມເນັນ ໄດ້ອະທິບາຍວ່າ ກອງທຶນຕອບໂຕ້ສຸກເສີນແຫ່ງສະຫະປະຊາຊາດ (CERF) ໄດ້ສະໜອງທຶນຊ່ວຍເຫຼືອລ້າ ຈຳນວນ 3.8 ລ້ານ ໂດລາສະຫະລັດ ແກ່ 4 ອົງການໃນເຄືອຂ່າຍ ສປຊ– WHO, WFP, FAO ແລະ UNDP - ເພື່ອໃຫ້ຮັກສາຊີວິດຂອງປະຊາຊົນ ພາຍຫຼັງໄພນ້ຳຖ້ວມໃນປີ 2018. ທຶນຊ່ວຍເຫຼືອລ້າດັ່ງກ່າວ ແມ່ນມີເປົ້າໝາຍຊ່ວຍເຫຼືອແຂວງຄຳມ່ວນ ແລະ ໂດຍການຊ່ວຍເຫຼືອຂອງທຶນດັ່ງກ່າວເຮັດໃຫ້ອົງການ UNDP ສາມາດສ້າງວຽກເຮັດງານທຳໄລຍະສັ້ນໃຫ້ແກ່ປະຊາຊົນ 3,000 ຄົນ ເຊິ່ງພວກເຂົາໄດ້ສ້ອມແປງຖະໜົນຫົນທາງ ແລະ ພື້ນຖານໂຄງລ່າງອື່ນໆທີ່ໄດ້ຮັບຄວາມເສຍຫາຍຈາກນ້ຳຖ້ວມ.

"ໄພນ້ຳຖ້ວມອາດຈະເຮັດໃຫ້ ລບຕ ມີການເຄື່ອນຍ້າຍ. ດ້ວຍເຫດນີ້, ການປູກຈິດສຳນຶກກ່ຽວກັບອັນຕະລາຍຂອງ ລບຕ ແກ່ເດັກນ້ອຍ ຈຶ່ງເປັນພາກສ່ວນໜຶ່ງສິ່ງທີ່ສຳຄັນຂອງວຽກງານຟື້ນຟູຫຼັງໄພພິບັດ. ນີ້ເປັນເຫດຜົນທີ່ວ່າເປັນຫຍັງພວກເຮົາຈຶ່ງໄດ້ມາທີ່ບ້ານດ່າງມື້ນີ້ ເພື່ອກ່າວຄຳຖະແຫຼງກ່ຽວກັບວັນສາກົນໂຄສະນາ ເພື່ອຕ້ານລະເບີດບໍ່ທັນແຕກ ແລະ ເພື່ອຮັບປະກັນຄວາມປອດໄພຂອງເດັກນ້ອຍເຫຼົ່ານີ້", ນີ້ເປັນຄຳເວົ້າຂອງທ່ານ ນ. ອິມໂມເນັນ.

ຫົວຂໍ້ວັນສາກົນ ເພື່ອຕ້ານລະເບີດບໍ່ທັນແຕກໃນປີນີ້ແມ່ນ "ອົງການສະຫະປະຊາຊາດ ສົ່ງເສີມເປົ້າໝາຍການພັດທະນາແບບຍືນຍົງ – ພື້ນທີ່ປອດໄພ – ບ້ານກໍປອດໄພ ", ເຊິ່ງສອດຄ່ອງຫຼາຍກັບການສະເຫຼີມສະຫຼອງໃນມື້ນີ້. ຄຳໝັ້ນໝາຍຂອງ ສປປ ລາວ ຕໍ່ກັບຫົວຂໍ້ດັ່ງກ່າວ ແມ່ນເຫັນໄດ້ຊັດເຈນໃນຄວາມພະຍາມເຮັດວຽກຢ່າງໜັກເພື່ອບັນລຸເປົ້າໝາຍການພັດທະນາແບບຍືນຍົງແຫ່ງຊາດ ເປົ້າໝາຍທີ 18 *ກ່ຽວກັບ ຊີວິດທີ່ປອດໄພຈາກລະເບີດບໍ່ທັນແຕກ .*

**ສຳລັບຂໍ້ມູນເພີ່ມເຕີມ, ຕິດຕໍ່:**

*ທ່ານ ນາງ ອິນດິໂກ ຮາໂມຊ໌ ໂຊໂລ*
*ຊ່ຽວຊານການສື່ສານ, ອົງການ ສປຊ ເພື່ອການພັດທະນາ ປະຈຳ ສປປ ລາວ*
*ໂທ: 020 7717 7913, ອີເມວ: ildiko.hamos@one.un.org*

*ທ່ານ ສົມລິດ ຄູນປະເສີດ*
*ຜູ້ຊ່ວຍການສື່ສານ, ອົງການ ສປຊ ເພື່ອການພັດທະນາ ປະຈຳ ສປປ ລາວ*
*ໂທ: 20 777 118 74, ອີເມວ: somlith.khounpaseuth@undp.org*